ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 40/ນຍ

ນະຄອນຫຼວງວຽງຈັນ, ວັນທີ 21 ກຸມພາ 2023

# ຂໍ້ຕົກລົງ
## ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍ ການຮຽນຮູ້ຕະຫຼອດຊີວິດ ສະບັບເລກທີ 208/ລບ, ລົງວັນທີ 23 ມີນາ 2020;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 103 /ສສກ, ລົງວັນທີ 22 ມັງກອນ 2023.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຫ່ງຊາດ (ຄຊຮ) ເຊິ່ງປະກອບ ມີບັນດາທ່ານ ດັ່ງນີ້:

1. ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2. ທ່ານ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
3. ທ່ານ ຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ ເປັນຮອງປະທານ;
4. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
5. ທ່ານ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ, ສະພາແຫ່ງຊາດ ເປັນກຳມະການ;
6. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ ເປັນກຳມະການ;
7. ທ່ານ ຮອງລັດຖະມົນຕີ ກະຊວງພາຍໃນ ເປັນກຳມະການ;
8. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນກຳມະການ;
9. ທ່ານ ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
10. ທ່ານ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
11. ທ່ານ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນກຳມະການ;
12. ທ່ານ ຮອງລັດຖະມົນຕີ ກະຊວງຍຸຕິທຳ ເປັນກຳມະການ;
13. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
14. ທ່ານ ຮອງລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ ເປັນກຳມະການ;
15. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນກຳມະການ;
16. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ;
17. ທ່ານ ຮອງຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ ເປັນກຳມະການ;

18. ທ່ານ ຮອງຫົວໜ້າສະຖາບັນວິທະຍາສາດ, ເສດຖະກິດ ແລະ ສັງຄົມແຫ່ງຊາດ ເປັນກຳມະການ;
19. ທ່ານ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;
20. ທ່ານ ຮອງປະທານ ສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
21. ທ່ານ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
22. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນຜູ້ຊີ້ນຳວຽກງານ ເປັນກຳມະການ;
23. ທ່ານ ຮອງຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
24. ທ່ານ ຫົວໜ້າກົມການສຶກສານອກໂຮງຮຽນ ກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
25. ທ່ານ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນກຳມະການ.

**ມາດຕາ 2 ໜ້າທີ່ ແລະ ຂອບເຂດ ຂອງຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຫ່ງຊາດ**

**2.1 ໜ້າທີ່:**

ຄະນະກຳມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຫ່ງຊາດ ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ ມີໜ້າທີ່ ແລະ ສິດດັ່ງນີ້:

1. ເປັນເສນາທິການຊ່ວຍລັດຖະບານໃນການ ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ວຽກງານການຮຽນຮູ້ຕະຫຼອດຊີວິດ ໃນຂອບເຂດທົ່ວປະເທດ.
2. ຊ່ວຍລັດຖະບານໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ລວມທັງ ການພົວພັນຮ່ວມມືກັບ ພາກພື້ນ ແລະ ສາກົນ ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຮຽນຮູ້ຕະຫຼອດຊີວິດ;
3. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ບັນດານິຕິກຳ, ແຜນຍຸດທະສາດ, ຂອບນະໂຍບາຍລວມ ແລະ ແຜນປະຕິບັດງານການຮຽນຮູ້ຕະຫຼອດຊີວິດ ໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ເພື່ອພິຈາລະນາຮັບຮອງ;
4. ຊີ້ນຳ, ຊຸກຍູ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ພາກເອກະຊົນ ໃນການຈັດຕັ້ງຜັນຂະຫຍາຍ ດຳລັດວ່າດ້ວຍ ການຮຽນຮູ້ຕະຫຼອດຊີວິດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິພາບ;
5. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ຫຼື ແຜນປະຕິບັດງານແຫ່ງຊາດ, ແຜນກິດຈະກຳພັດທະນາ ສຳລັບວຽກງານການຮຽນຮູ້ຕະຫຼອດຊີວິດ ເພື່ອຮັບປະກັນທັງດ້ານຄຸນນະພາບ ແລະ ຄວາມສອດຄ່ອງ ເປັນແຕ່ລະໄລຍະ;
6. ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານຜົນ ຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ ຫຼື ແຜນປະຕິບັດງານແຫ່ງຊາດ, ແຜນກິດຈະກຳພັດທະນາ ສຳລັບວຽກງານການຮຽນຮູ້ຕະຫຼອດຊີວິດ ໃນແຕ່ລະໄລຍະ ໃຫ້ແກ່ລັດຖະບານ;
7. ປະຕິບັດໜ້າທີ່ອື່ນ ກ່ຽວກັບນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ຕາມການມອບໝາຍຂອງ ລັດຖະບານ.

**2.2 ຂອບເຂດສິດ:**

1. ລະດົມທຸກກຳລັງແຮງໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ທາງດ້ານທຶນຮອນ ແລະ ດ້ານວິຊາການ ເຂົ້າໃນວຽກງານການຮຽນຮູ້ຕະຫຼອດຊີວິດ;
2. ແຕ່ງຕັ້ງຄະນະກຳມະການດ້ານວິຊາການແຕ່ລະຂັ້ນ ພ້ອມທັງກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບ ຂອງຄະນະກຳມະການດັ່ງກ່າວ ໃຫ້ຊັດເຈນ;
3. ຮຽກປະຊຸມສະໄໝສາມັນ ແລະ ວິສາມັນ ກ່ຽວກັບວຽກງານການຮຽນຮູ້ຕະຫຼອດຊີວິດ;

4. ສະເໜີລັດຖະບານເພື່ອຍຸບເລີກ, ລຶບລ້າງ ແຜນຍຸດທະສາດ ຫຼື ແຜນປະຕິບັດງານແຫ່ງຊາດ, ແຜນກິດຈະກໍາພັດທະນາ ສໍາລັບການຮຽນຮູ້ຕະຫຼອດຊີວິດ ທີ່ເຫັນວ່າບໍ່ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;

5. ປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອພົວພັນຂະຫຍາຍ ແລະ ສົ່ງເສີມວຽກງານການຮຽນຮູ້ຕະຫຼອດຊີວິດ ໃນທົ່ວສັງຄົມ;

6. ພົວພັນ ແລະ ຮ່ວມມື, ແລກປ່ຽນບົດຮຽນກັບອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການຮຽນຮູ້ຕະຫຼອດຊີວິດ;

7. ມີສິດນໍາໃຊ້ງົບປະມານໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກໍານົດ;

8. ປະຕິບັດສິດອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 3 ງົບປະມານ ແລະ ຕາປະທັບ**

ງົບປະມານຮັບໃຊ້ສໍາຫຼັບການເຄື່ອນໄຫວ ຂອງຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງ ຊາດ ແມ່ນນໍາໃຊ້ງົບປະມານຂອງລັດ, ທຶນຊ່ວຍເຫຼືອລ້າ ຫຼື ກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ; ທຶນຊ່ວຍເຫຼືອລ້າ ຫຼື ທຶນແລກປ່ຽນ ຂອງອົງການປົກຄອງທ້ອງຖິ່ນ ຫຼື ຂອງສະຖານການສຶກສາ ພາຍໃນ ແລະ ຕ່າງປະເທດ; ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

ຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຫ່ງຊາດ ນໍາໃຊ້ຕາປະທັບຂອງຕົນ ເຂົ້າໃນວຽກງານທາງລັດຖະການ. ສໍາລັບກອງເລຂາຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແມ່ນນໍາໃຊ້ຕາປະທັບ ຂອງກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

4.1 ໃຫ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ມີຊື່ໃນ ມາດຕາ 1 ຂອງຂໍ້ຕົກລົງ ສະບັບນີ້ ແຈ້ງລາຍຊື່ຜູ້ຕາງໜ້າຂອງຕົນໃຫ້ກະຊວງ ສຶກສາທິການ ແລະ ກິລາ ເພື່ອຊາບ ແລະ ກໍລະນີຜູ້ທີ່ໄດ້ແຈ້ງລາຍຊື່ແລ້ວ ຫາກມີການຊັບຊ້ອນ ຫຼື ອອກຮັບອຸດໜູນບໍານານ ແມ່ນກະຊວງ ສຶກສາທິການ ແລະ ກິລາ ເຮັດໜັງສືທາງການ ຫາພາກສ່ວນນັ້ນໆ ແຈ້ງລາຍຊື່ຜູ້ໃໝ່ມາປ່ຽນແທນ.

4.2 ມອບໃຫ້ຄະນະກໍາມະການດັ່ງກ່າວ ແບ່ງຄວາມຮັບຜິດຊອບພາຍໃນ ແລະ ສ້າງແຜນເຄື່ອນໄຫວໃຫ້ລະອຽດ.

4.3 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ